## ຖະແຫຼງການ ໂຮຈິມິນ (Ho Chi Minh)

## ນ້ຳ, ພະລັງງານ ແລະ ການຮັບປະກັນດ້ານສະບຽງອາຫານ ໃນ ພາວະສະພາບ ການປ່ຽນແປງຂອງດິນຟ້າອາກາດ ໃນເຂດອ່າງແມ່ນ້ຳຂອງ

**5 ເມສາ 2014**

ພວກເຮົາ, ຫົວໜ້າ ລັດຖະບານ ຂອງ ແຫ່ງ ລາດຊະອານາຈັກ ກຳປູເຈຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ, ລາດຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ໄດ້ພົບປະກັນທີ່ ເມືອງ ໂຮ່ຈິມິນ, ຫວຽດນາມ ໃນກອງປະຊຸມສຸດຍອດ ຂອງ ຄະນະກຳມະທິການແມ່ນ້ຳຂອງສາກົນ (MRC).

ພວກເຮົາໄດ້ຮັບຮອງເອົາ ຄວາມສຳຄັນທີ່ຈຳເປັນ ຂອງການນຳໃຊ້ ແລະ ຄຸ້ມຄອງນ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ໃນເຂດອ່າງແມ່ນ້ຳຂອງ ແລະ ສືບຕໍ່ໃຫ້ຄຳໝັ້ນສັນຍາ ທາງດ້ານ ການເມືອງ ໃນການປະຕິບັດ ສົນທິສັນຍາ ແມ່ນ້ຳຂອງ ປີ 1995, ແລະ ສາມັກຄີຮ່ວມມືກັນ ເປັນຈິດໜຶ່ງໃຈດຽວຂອງແມ່ນ້ຳຂອງ;

ພວກເຮົາສັງເກດເຫັນວ່າ ການພັດທະນາ ຊັບພະຍາກອນນ້ຳ ໃນເຂດ ອ່າງແມ່ນ້ຳຂອງ ແມ່ນ ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃນໄຂງເຂດ, ເຊັ່ນ ສຳລັບ ການເດີນເຮືອ, ພະລັງງານ ແລະ ການຜະລິດສະບຽງອາຫານ, ແຕ່ພ້ອມກັນນັ້ນ ກໍ່ຍັງສົ່ງຜົນກະທົບ ໃນທາງລົບ ແກ່ ສັງຄົມ ແລະ ສິ່ງເວດລ້ອມ ໃນເຂດອ່າງ ເຊິ່ງເປັນສິ່ງຈຳເປັນທີ່ຕ້ອງໄດ້ ແກ້ໄຂ ຢ່າງມີປະສິດທິພາບ ແລະ ສົມບູນ;

ພວກເຮົາຮັບຮູ້ວ່າ ການປ່ຽນແປງດິນຟ້າອາກາດ ແມ່ນ ບັນຫາສາກົນ, ເຊິ່ງມີຜົນກະທົບ ຕໍ່ຊີວິດ ການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ເສດຖະກິດ ໃນທົ່ວທຸກພາກ ຂອງ ອ່າງແມ່ນ້ຳຂອງ. ມາດຕະການຫຼຸດຜ່ອນ ແລະ ການປັບຕົວ ຕໍ່ການປ່ຽນແປງດິນຟ້າອາກາດ ແມ່ນມີຄວາມສຳຄັນຫຼາຍ ແລະ ຈຳເປັນທີ່ຈະຕ້ອງມີການແກ້ໄຂ ເປັນການຮີບດ່ວນ;

ພວກເຮົາໄດ້ທົບທວນຄືນ ການປະຕິບັດ ວຽກງານທີ່ເປັນ ບູລິມະສິດ ຂອງ ກອງປະຊຸມສຸດຍອດ MRC ຄັ້ງທີໜຶ່ງ ເຊິ່ງລວມມີ ການຮັບຮອງ ແລະ ການປະຕິບັດ ຍຸດທະສາດການພັດທະນາ ອ່າງພື້ນຖານ-ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ (IWRM) ຂອງ MRC, ແຜນຍຸດທະສາດ MRC2011 – 2015, ແລະ ກຳນົດ ກາລະໂອກາດ ແລະ ຄວາມສ່ຽງ ຂອງ ໂຄງການພະລັງການໄຟຟ້ານ້ຳຕົກ, ຊົນລະປະທານ, ການປະມົງ, ການເດີນເຮືອ, ການຄຸ້ມຄອງ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ການຄຸ້ມຄອງແຫຼ່ງຕົ້ນນ້ຳ, ການທ່ອງທ່ຽວ ແລະ ສິ່ງເວດລ້ອມ

ລວມທັງການຄຸ້ມຄອງລະບົບນິເວດ ໃນເຂດອ່າງ ເພື່ອຮັບປະກັນດ້ານສະບຽງອາຫານ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ;

ພວກເຮົາຢັ້ງຢືນອີກຄັ້ງ ເຖິງຄວາມ ມຸ້ງໝັ້ນສືບຕໍ່ ແລະ ເຂັ້ມແຂງ ຂອງພວກເຮົາ ໃນການຮ່ວມມືກັນ ແລະ ສົ່ງເສີມ ການພັດທະນາ ອ່າງແມ່ນໍ້າຂອງ ແບບຍືນຍົງ, ແລະ ການນໍາໃຊ້, ການອະນຸລັກ ແລະ ການຄຸ້ມຄອງ ນໍ້າ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ, ແລະ ໄດ້ຕົກລົງກັນຕາມຖະແຫຼງການ ດັ່ງຕໍ່ໄປນີ້:

**ຜົນສໍາເລັດຈາກ ກອງປະຊຸມສຸດຍອດ MRC ຄັ້ງທີ ໜຶ່ງ**

ພວກເຮົາ, ບັນດາຫົວໜ້າ ລັດຖະບານ, ຮັບຮູ້ເຖິງຄວາມຄືບໜ້າ ແລະ ຜົນສໍາເລັດ ໃນໄລຍະ 4 ປີຜ່ານມາ ນັບຈາກ ກອງປະຊຸມສຸດຍອດ MRC ຄັ້ງທີ ໜຶ່ງ.

ນັບຈາກການຮັບຮອງເອົາ ຍຸດທະຍາດ ການພັດທະນາອ່າງພື້ນຖານ MRC IWRM ປີ 2011, ພວກເຮົາສັງເກດເຫັນດ້ວຍຄວາມຊື່ນຊົມວ່າ ບັນດາປະເທດພາຄີສະມາຊິກ MRC ແລະ ກອງເລຂາ ໄດ້ໃຊ້ຄວາມພະຍາຍາມຢ່າງຫຼວງຫຼາຍ ໃນການພັດທະນາ ແຜນດໍາເນີນງານແຫ່ງຊາດ ແລະ ໂຊງເຂດ ເພື່ອປະຕິບັດຍຸດທະສາດ, ເຊິ່ງເສີມສ້າງ ແຜນພັດທະນາ ເສດຖະກິດ ແລະ ສັງຄົມ ຂອງ ບັນດາປະເທດພາຄີສະມາຊິກ.

ພວກເຮົາ ຮັບຮູ້ ການປະຕິບັດລະບຽບການ ທີ່ເພີ້ມຂື້ນ ຂອງ ສົນທິສັນຍາ ແລະ ການໃຫ້ ການສຶກສາເບື້ອງຕົ້ນ ແລະ ແຈ້ງການລ່ວງໜ້າ (PNPCA) ເພື່ອສົ່ງເສີມ ໃນວຽກງານຕັດສິນໃຈ ມີປະສິດທິພາບ ໃນໂຄງການ ພັດທະນາຊັບພະຍາກອນນໍ້າ ທີ່ຖືກສະເໜີຂື້ນ ໃນ ອ່າງແມ່ນໍ້າຂອງ.

ພວກເຮົາມີຄວາມຍິນດີທີ່ໃຫ້ຂໍ້ສັງເກດວ່າ ການອະນຸມັດ ຂອງ ລະບຽບການ ກ່ຽວກັບ ຄຸນະພາບນໍ້າ ໃນຕົ້ນປີ 2011 ສໍາເລັດຢ່າງສົມບູນ ໃນຊຸດ ລະບຽບການ ການນໍາໃຊ້ນໍ້າ ຂອງ MRC ເຊິ່ງມີ ຂັ້ນຕອນ ແລະ ລະບຽບດ້ານວິຊາການ ເພື່ອຊ່ວຍ ບັນດາປະເທດພາຄີສະມາຊິກ MRC ໃນການ ນໍາໃຊ້ ນໍ້າ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ໃນອ່າງແມ່ນໍ້າຂອງ ແບບຍືນຍົງ.

ພວກເຮົາສັງເກດເຫັນຄວາມສໍາຄັນ ແລະ ຄຸນປະໂຫຍດ ຂອງການ ແລກປ່ຽນຂໍ້ມູນຂ່າວສານ ຂອງ ບັນດາປະເທດສະມາຊິກທີ່ຕໍ່ເນື່ອງ ພາຍໃຕ້ ລະບຽບການ ການແບ່ງປັນ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານ (PDIES), ແລະ ພວກເຮົາມີຄວາມ ຍິນດີ ຕໍ່ການຮ່ວມມືທີ່ໄດ້ຮັບການເສີມຂະຫຍາຍ ກັບ ບັນດາຄູ່ຮ່ວມເຈລະຈາ ຂອງ MRC, ເປັນຕົ້ນແມ່ນ ສາທາລະນະລັດ ປະຊາຊົນຈີນ ແລະ ສະຫະພາບພະມ້າ.

ພວກເຮົາ ຮັບຮູ້ ຄວາມກ້າວໜ້າ ທີ່ມີຜົນສຳເລັດ ໃນ ແຜນງານລຽບແຄມນ້ຳ ຂອງ MRCS ດ້ວຍຜົນສຳເລັດໃນການເລີ່ມ ໂຄງການ (MRC Junior Riparian Professional Programme) ແລະ ໄດ້ເພີ່ມຈຳນວນພະນັກງານ ທີ່ເຮັດວຽກລຽບຕາມແຄມນ້ຳ ແລະ ຊ່ຽວຊານລະດັບຊາດ ທີ່ເຮັດວຽກກັບ MRCS.

ດ້ວຍວິໄສທັດ ທີ່ MRC ຈະກຸ້ມຕົນເອງທາງດ້ານການເງິນ ໂດຍບັນດາປະເທດພາຄີສະມາຊິກ ໃນປີ 2030, ພວກເຮົາຮັບຮູ້ດ້ວຍຄວາມຊື່ນຊົມວ່າ ການກະກຽມ ທີ່ MRC ກຳລັງດຳເນີນ ເພື່ອປະຕິບັດ ການໃຫ້ອຳນາດສູ່ທ້ອງຖິ່ນ ໃນໜ້າທີ່ວຽກງານຄຸ້ມຄອງ ອ່າງແມ່ນ້ຳທີ່ສຳຄັນ ທີ່ໄດ້ອະທິບາຍ ໃນ ແຜນທິດທາງແຫ່ງຊາດ 4 ແຜນ ແລະ ໜຶ່ງ ໂຂງເຂດ, ລວມມີ ວຽກບູລິມະສິດ ແລະ ຂີດໝາຍ.

ພວກເຮົາມີຄວາມຮູ້ບຸນຄຸນ ໃນ ການສະໜັບສະໜູນ ທາງດ້ານວິຊາການ ແລະ ການເງິນທີ່ເພີ່ມຂື້ນ ຈາກ ບັນດາຄູ່ຮ່ວມພັດທະນາ ເຊິ່ງຈະເຮັດໃຫ້ໂຄງການຕ່າງໆ ຂອງ MRC ມີຄວາມໝັ້ນຄົງ ຈົນກ່ວາ ປີ 2015, ແລະ ກະກຽມເພື່ອການກຸ້ມຕົວເອງທາງດ້ານການເງິນພາຍໃນ ປີ 2030.

ພວກເຮົມຍັງສັງເກດເຫັນວ່າ MRC ໄດ້ສ້າງສາຍພົວພັນ ກັບ ASEAN ແລະ ຄະນະກຳມາທິການ ແມ່ນ້ຳ ມິຊິດຊິປີ (Mississippi River Commission)ແລະ ຄົ້ນຫາການຮ່ວມມື ກັບ ສາກົນ ແລະ ໂຂງເຂດອື່ນ ເພື່ອ ສົ່ງເສີມການພັດທະນາ ແລະ ການຄຸ້ມຄອງ ຊັບພະຍາກອນນ້ຳໃນອ່າງແມ່ນ້ຳຂອງ ໃຫ້ຍືນຍົງສືບຕໍ່ໄປ.

ພວກເຮົາຮັບຮູ້ດ້ວຍຄວາມຍິນດີກ່ຽວກັບ ຜົນຂອງ Mekong2Rio: ກອງປະຊຸມສາກົນ ກ່ຽວກັບ ການຄຸ້ມຄອງອ່າງນ້ຳລະຫວ່າງຊາດ) International Conference on Trans-boundary River Basin Management( ເຊິ່ງໄດ້ຈັດຂື້ນ ໃນວັນທີ 1-3 ເດືອນ ພຶດສະພາ ປີ 2012 ຢູ່ ພູເກັດ, ປະເທດໄທ, ແລະ *ກອງປະຊຸມສາກົນ ກ່ຽວກັບ ການຮ່ວມມື ດ້ານ ນ້ຳ, ພະລັງງານ ແລະ ການຄ້ຳປະກັນດ້ານສະບຽງອາຫານ ໃນ ເຂດອ່າງລະຫ່ວາງປະເທດ ພາຍໃຕ້ສະພາບ ການປ່ຽນແປງຂອງດິນຟ້າອາກາດ* (*International Conference on Cooperation for Water, Energyand Food Security in Trans-boundary Basin under Changing Climate (ເຊິ່ງຈັດຂື້ນໃນ ວັນທີ 2-3* ເມສາ, 2014 ໃນ ເມືອງ ໂຮ່ຈິມິນ, ຫວຽດນາມ, ເຊິ່ງເປັນໂອກາດທີ່ດີ ໃນການແລກປ່ຽນ ແລະ ຮຽນຮູ້ຈາກສະສົບການຈາກສາກົນ ໃນການຄຸ້ມຄອງ ແລະ ພັດທະນາ ນ້ຳລະຫວ່າງປະເທດ.

## ກາລະໂອກາດ ແລະ ຄວາມທ້າທາຍ ໃນໂຂງເຂດ

ພວກເຮົາ, ບັນດາຫົວໜ້າ ລັດຖະບານ, ຮັບຮູ້ວ່າ MRC ປະເຊີນກັບ ທັງ ກາລະໂອກາດ ແລະ ຄວາມທ້າທາຍ ຕ່າງໆ ຫຼາຍຢ່າງ ໃນທົດສະວັດໜ້ານີ້.

ຄວາມກົດດັນໃນການພັດທະນາທີ່ເພີ່ມຂຶ້ນ ເຊັ່ນ ການເພີ່ມຂຶ້ນຂອງປະຊາກອນ ແລະ ການຂະຫຍາຍຕົວ ຂອງເສດຖະກິດ ຈະສ້າງ ຄວາມຕ້ອງການ ຢ່າງຫຼວງຫຼາຍ ໃນດ້ານ ນໍ້າ, ອາຫານ ແລະ ພະລັງງານ, ເຊິ່ງຈະເປັນພາລະແບກຫາບໃຫ້ແກ່ຊັບພະຍາກອນໃນອ່າງແມ່ນໍ້າຂອງ. ໃນເວລາດຽວກັນ, ວິກິດການເສດຖະກິດຂອງໂລກ ໄດ້ເຮັດໃຫ້ ການລົງທຶນ ແລະ ການໃຫ້ທຶນ ເພື່ອສະໜັບສະໜູນ ໂຄງການ ຂອງ MRC ກໍ່ຫຼຸດຜ່ອນລົງ. ການຮັບປະກັນ ຄວາມໝັ້ນຄົງດ້ານນໍ້າ ແລະ ການ ຍັບຍັ້ງສິ່ງທີ່ຈະເກີດຂຶ້ນ ແລະ ການເພີ່ມຂຶ້ນຂອງຄວາມສ່ຽງ ຕໍ່ ການຮັບປະກັນ ດ້ານ ສະບຽງອາຫານ ແລະ ພະລັງງານ, ແລະ ສະເຖຍລະພາບ ແລະ ການເຕີບໂຕຂອງເສດຖະກິດ, ແມ່ນ ສິ່ງທ້າທາຍທີ່ໜ້າຢ້ານກົວ ທີ່ໂຂງເຂດກຳລັງປະເຊີນຢູ່.

ໃນຄວາມພະຍາຍາມຢ່າງຕໍ່ເນື່ອງ ທີ່ຈະ ຫຼຸດຜ່ອນ ໄພພິບັດທາງທຳມະຊາດ, ການຮັບຮູ້ວ່າ ການປ່ຽນແປງຂອງດິນຟ້າອາກາດ ຈະສືບຕໍ່ປ່ຽນ ລະບົບນໍ້າ ຂອງອ່າງ ເຊິ່ງຈະມີຜົນກະທົບເຖິງ ຊີວິດການເປັນຢູ່ຂອງປະຊາຊົນ ແລະ ເສດຖະກິດ ໃນທົ່ວອ່າງ.

ຄວາມສຳຄັນ ຂອງການຮ່ວມມືທີ່ເພີ່ມຂຶ້ນ ເພື່ອ ການພັດທະນາ ອ່າງແມ່ນໍ້າຂອງແບບຍືນຍົງ ແມ່ນເປັນທີ່ຮັບຮູ້. ໂອກາດໃນການຮ່ວມມືໃໝ່ ກັບ ໂຄງການສາກົນ ແລະ ໂຂງເຂດອື່ນ ຈະໄດ້ຮັບການຊອກຄົ້ນ; ການໃຫ້ການສະໜັບສະໜູນ ທາງດ້ານວິຊາການ ແລະ ທຶນ ຈາກ ຄູ່ຮ່ວມພັດທະນາໃໝ່ຈະໄດ້ຮັບການຊອກຄົ້ນ, ເພື່ອຊ່ວຍຮັບປະກັນ ວ່າ MRC ຈະສາມາດສືບຕໍ່ບັນດາໜ້າວຽກ ທີ່ສຳຄັນ ຂອງອົງການ.

## ເຂດບູລິມະສິດໃນການດຳເນີນງານ

ພວກເຮົາ, ບັນດາຫົວໜ້າລັດຖະບານ, ມີຄວາມຕ້ອງການໃຫ້ MRC ເລັ່ງໃສ່ວຽກທີ່ເປັນບູລິມະສິດດັ່ງຕໍ່ໄປນີ້:

i. ເລັ່ງປະຕິບັດ ການສຶກສາຂອງ ສະພາ MRC ກ່ຽວກັບ ການພັດທະນາ ແລະ ການຄຸ້ມຄອງແບບຍືນຍົງ, ລວມທັງຜົນກະທົບ ຂອງໂຄງການເຂື່ອນໄຟຟ້ານໍ້າຕົກ ຕາມລຳແມ່ນໍ້າຂອງ, ອີງໃສ່ການສຶກສາຂອງ ສາມຫຼ່ຽມແມ່ນໍ້າຂອງ (Mekong Delta Study) ເຊິ່ງລິເລີ່ມໂດຍຫວຽດນາມ ເພື່ອສະໜອງ ຂໍ້ສະເໜີແນະ ແລະ ຄຳປຶກສາທີ່ດີ ກ່ຽວກັບ ການພັດທະນາແບບຍືນຍົງ ໃນເຂດອ່າງ;

ii. ທົບທວນຄືນ, ປັບຂໍ້ມູນລ່າສຸດ ແລະ ປະຕິບັດ ແຜນຍຸດທະສາດ ການພັດທະນາອ່າງພື້ນຖານ IWRM ແລະ ປະຕິບັດ ແຜນຍຸດທະສາດ MRC 2011-2015, ກະກຽມ ແລະ ປະຕິບັດ ແຜນຍຸດ ທະສາດ 2016-2020 ເພື່ອຊ່ວຍໃນການພັດທະນາອ່າງ ໃນປະຈຸບັນ ແລະ ອານາຄົດ;

iii. ຫຼີກລ້ຽງ, ຫຼຸດຜ່ອນ ແລະ ບັນເທົາ ຄວາມສ່ຽງ ຕໍ່ລະບົບນິເວດຂອງນໍ້າ, ການຮັບປະກັນດ້ານສະບຽງອາຫານ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ຄຸນະພາບນໍ້າທີ່ໄດ້ຮັບການຂົ່ມຂູ່ຈາກ ການກະສິກໍາແບບເລັ່ງລັດ, ການເພາະລ້ຽງສັດນໍ້າ ແລະ ຊົນລະປະທານ ກໍ່ຄື ການສ້າງເຄື່ອນ ໄຟຟ້ານໍ້າຕົກ, ການເດີນເຮືອ ແລະ ກິດຈະກໍາໂຄງການພັດທະນາອື່ນໆ, ຮັບຮູ້ວ່າຜົນກະທົບຂອງການປ່ຽນແປງຂອງດິນຟ້າອາກາດ ສາມາດຄວາມສ່ຽງເຫຼົ່ານີ້ຮ້າຍແຮງຂື້ນເຕີ່ມ;

iv. ສືບຕໍ່ປັບປຸງ ການປະຕິບັດ ລະບຽບການຂອງ MRC ເພື່ອສົ່ງເສີມການປະຕິບັດສົນທິສັນຍາ ແມ່ນໍ້າຂອງ ປີ 1995; ມຸ້ງໝັ້ນປະຕິບັດ ລະບຽບການແມ່ນໍ້າຂອງຢ່າງມີປະສິດທິພາບເພື່ອໃຫ້ບັນລຸຕາມຈຸດປະສົງເປົ້າໝາຍທີ່ວາງໄວ້;

v. ຊອກຄົ້ນສຳຫຼວດ ແລະ ກຳນົດກາລະໂອກາດ ໃນການຂະຫຍາຍການຮ່ວມມື ລະຫວ່າງຄູ່ເຈລະຈາຂອງ MRC, ຄູ່ຮ່ວມພັດທະນາທີ່ມີຢູ່ໃນປະຈຸບັນ ແລະ ໃໝ່ ແລະ ແຜນງານລິເລີ່ມສາກົນ ແລະ ໂຂງເຂດ;

vi. ເພີ່ມຄວາມພະຍາຍາມໃນການ ຫຼຸດຜ່ອນຄວາມສ່ຽງ ໄພພິບັດໃນທົ່ວອ່າງ ກ່ຽວກັບ ໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ ແລະ ຜົນກະທົບຈາກການເພີ່ມຂື້ນຂອງລະດັບນໍ້າທະເລ; ຕິດຕາມກວດກາ ແລະ ວັດແທກ ເພື່ອຮັກສາຄຸນະພາບນໍ້າໃຫ້ຢູ່ໃນສະພາບທີ່ດີຢູ່ສະເໝີ ໃນອ່າງນໍ້າແມ່ນໍ້າຂອງ;

**ທິດທາງຕໍ່ໜ້າ**

ພວກເຮົາ, ບັນດາຫົວໜ້າລັດຖະບັນ, ຢັ້ງຢືນເຕີ່ມອີກ ເຖິງຄວາມສາມັກຄີ ແລະ ຄວາມມຸ້ງໝັ້ນທາງດ້ານການເມືອງ ໃນລະດັບສູງ ໃນການປະຕິບັດ ສົນທິສັນຍາແມ່ນໍ້າຂອງ 1995;

ພວກເຮົາໃຫ້ຄໍາໝັ້ນສັນຍາທີ່ຈະ ເຮັດວຽກຮ່ວມກັນ ເພື່ອເສີມຂະຫຍາຍບົດບາດ ຂອງ MRC ເພື່ອຮັບປະກັນການນໍາໃຊ້ ລະບຽບການຄຸ້ມຄອງຊັບພະຍາກອນນໍ້າແບບປະສົມປະສານ ເພື່ອຮັບປະກັນການນໍາໃຊ້ ແລະ ການຮັກສານໍ້າ, ສະບຽງອາຫານ ແລະ ພະລັງງານ ໃຫ້ໂຂງເຂດ ໃຫ້ຍືນຍົງ;

ພວກເຮົາ ຂໍຢໍ້າເຖິງການສະໜັບສະໜູນຂອງພວກເຮົາ ໃນການ ສົ່ງເສີມ ແລະ ເສີມສ້າງ ການຮ່ວມມື ແລະ ການພົວພັນ ດ້ານວຽກງານຂອງ MRC ກັບບັນດາຄູ່ຮ່ວມເຈລະຈາ, ຄູ່ຮ່ວມພັດທະນາ, ແຜນງານໂຄງການລິເລີ່ມຂອງໂຂງເຂດ ແລະ ສາກົນ, ສັງຄົມປະຊາຊົນ, ພາກສ່ວນເອກະຊົນ ແລະ ອື່ນໆ; ແລະ ຮຽກຮ້ອງໃຫ້ພວກເຂົາ ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ ແກ່ MRC ແລະ ບັນດາປະເທດພາຄີສະມາຊິກສ່ວນສະເພາະ ໃນການປະຕິບັດໂຄງການ ແລະ ການສຶກສາຄົ້ນຄ້ວາ ກ່ຽວກັບການພັດທະນາທີ່ຍືນຍົງ ໃນ ອ່າງແມ່ນໍ້າຂອງ;

ພວກເຮົາຍັງສະແດງການການສະໜັບສະໜູນຂອງພວກເຮົາຕໍ່ MRC ເພື່ອສືບຕໍ່ກະກຽມ ການກະຈາຍອຳນາດ ໜ້າວຽກການຄຸ້ມຄອງບໍລິຫານອ່າງແມ່ນ້ຳຂອງ MRC ລົງສູ່ທ້ອງຖິ່ນ, ເພື່ອເປັນການປູທາງໄປສູ່ ການກຸ້ມຕົນເອງທາງດ້ານການເງິນ ຂອງອົງການ ໃນປີ 2030;
ພວກເຮົາ ເນັ້ນເຖິງຄວາມ ຈຳເປັນ ໃນການໃຫ້ບູລິມະສິດ ວຽກງານ ສ້າງຄວາມອາດສາມາດ ໃຫ້ແກ່ບັນດາປະເທດພາຄີສະມາຊິກ;
ພວກເຮົາເຫັນດີ ໃນການປະຕິບັດໜ້າທີ່ ສະພາ MRC ເພື່ອຮັບປະກັນການປະຕິບັດ ຖະແຫຼງການນີ້ໃຫ້ມີປະສິດທິພາບ ໂດຍຜ່ານ ແຜນງານ ແລະ ໂຄງການປະຕິບັດຕ່າງໆ.

ພວກເຮົາຂໍສະແດງຄວາມປິ້ມປິຕິຢ່າງຈິງມາຍັງປະເທດຫວຽດນາມ ໃນການເປັນເຈົ້າພາບ ກອງປະຊຸມສຸດຍອດ MRC ຄັ້ງທີ 2 ຄັ້ງນີ້, ແລະ ພວກເຮົາ ຈະລໍຖ້າຍ ກອງປະຊຸມສຸດຍອດ MRC ຄັ້ງທີ 3 ທີ່ຈະຈັດຂື້ນໃນເດືອນ ເມສາ 2018 ຢູ່ປະເທດ ກຳປູເຈຍ.

ຖືກຮັບຮອງເອົາທີ່ ໂຮຈິມິນ, ຫວຽດນາມ ໃນວັນທີ 5 ເມສາ 2014 ໃນສະບັບພາສາອັງກິດ.